# ບົດທີ 18

## ຄວາມຈອງຫອງ



ສິ່ງທີ່ພະຍາມານສະເຫນີໃຫ້ພະເຍຊູ ກໍເຫມືອນວ່າເປັນແນວຄິດທີ່ດີ ມີແຕ່ພະເຍຊູ ຈະໂຕນລົງຈາກຫຼັງຄາພະວິຫານພວກເທວະດາຈະມາຊ່ວຍ ແລ້ວປະຊາຊົນທຸກຄົນໃນກຸງເຢລູຊາເລັມຈະຂາບໄຫວ້ພະອົງ ເຂົາຈະຮັບຮູ້ວ່າພະເຍຊູເປັນພະເມຊີອາ ຄືຄວາມທໍານວາຍເລື່ອງກະສັດທີ່ຈະສະເດັດມາຈະສໍາເລັດໃນຕາຂອງເຂົາ. ແຕ່ພະເຍຊູບໍ່ໄດ້ຟັງຄວາມຂອງພະຍາມານ ພະອົງທົນທຸກທໍລະມານແລ້ວຕາຍ.

ນັກເທດບາງຄົນອາດຈະຕົກໃນການທົດລອງຢ່າງນັ້ນ ດ້ວຍການທີ່ເຂົາຢາກໃຫ້ປະຊາຊົນນິຍົມເຂົາຫຼາຍ. ພະເຍຊູຕໍ່ສູ້ການທົດລອງນັ້ນໄດ້ຢ່າງໃດ? (ໃຫ້ຮຽນຕໍ່ໄປຈຶ່ງຈະຮູ້)

**1** ລະຫວ່າງການທົດລອງໃນປ່າແລະການທົດລອງຢູ່ຫຼັງຄາພະວິຫານ.

ກ. ອັນໃດປຽບກັບການທຸກຍາກ ຄວາມຂັດສົນ ແລະການບໍ່ຍຸດຕິທຳ? ______________

ຂ. ອັນໃດວ່າດ້ວຍຕຳແໜ່ງສູງ ຄວາມອຸດົມສົມບູນ? __________________________

**2** ໃຫ້ອ່ານ ພະບັນຍັດຄັ້ງທີສອງ 8:11-17 ຕອນພະຄຳພີນີ້ບອກວ່າ ຫຼັງຈາກອິສະລາເອນອອກຈາກປ່າ ເຂົ້າໄປໃນ ເມືອງທີ່ມີອາຫານການກິນແລະມີຊີວິດອັນບໍລິບູນ ເຂົາຈະເປັນຢ່າງໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ເຂົາຈະບໍ່ຕົກໃນການທົດລອງອີກຈັກເທື່ອ

ຂ. ເຂົາຈະບໍ່ມີບັນຫາອີກຕໍ່ໄປ

ຄ. ເຂົາຈະຈອງຫອງວ່າໄດ້ຮັ່ງມີຍ້ອນເຫື່ອແຮງຂອງຕົນເອງ

ງ. ເຂົາຈະຂອບໃຈແຕ່ພະອົງຢ່າງດຽວ

**3** ຝ່າຍພວກເຮົາເດ ມີອັນຕະລາຍຢ່າງໃດໃນຊັບສົມບັດ? (ໃຫ້ເລືອກ)

ກ. ເຮົາຈະບໍ່ຕົກໃນການທົດລອງອີກຈັກເທື່ອ

ຂ. ເຮົາຈະບໍ່ມີບັນຫາອີກຕໍ່ໄປ

ຄ. ເຮົາຈະຖືກທົດລອງໃຫ້ຈອງຫອງຂຶ້ນ

ງ. ເຮົາຈະຂອບໃຈພະເຈົ້າ

**4** ປາກົດວ່າພະຍາມານຈະມາຕໍ່ສູ້ເຮົາໃນສະຖານະການໃດທີ່ເຫຼືອເກີນຄື: ທຸກເຫຼືອເກີນ ຢ່າງດຽວກັບພະອົງໃນປ່າ ຫຼືມີຕຳແໜ່ງສູງເຫຼືອເກີນ ຢ່າງພະອົງຢູ່ເທິງຫຼັງຄາພະວິຫານ. ເຮົາຈະຢູ່ໃນສະພາບມີສຸກຫຼາຍ ຫຼື ທຸກຫຼາຍໃນເວລາໂສກເສົ້າຫຼາຍ ຫຼືເວລາຊົມຊື່ນຍິນດີຫຼາຍ, ໃນເວລາເຫຼົ່ານັ້ນພະຍາມານຈະຍຶດເອົາໂອກາດມາທົດລອງເຮົາ. ເຮົາອາດຈະຮຽນຮູ້ຈາກຕົວຢ່າງຂອງພະເຢຊູ ວ່າຈະຕໍ່ສູ້ການທົດລອງຢ່າງໃດໄດ້. ໃຫ້ອ່ານຈາກ ຟີລິບປອຍ 4:11-13 ໂປໂລຮຽນຮູ້ຕໍ່ສູ້ການທົດລອງໃນຖານະໃດ? (ໃຫ້ເລືອກ)

ກ. ໃນເວລາທີ່ປະສົບການຕົກຕ່ຳຢ່າງດຽວ

ຂ. ໃນເວລາທີ່ປະສົບກັບຄວາມອຸດົມສົມບູນຢ່າງດຽວ

ຄ. ຕໍ່ສູ້ການທົດລອງບໍ່ໄດ້ໃນທັງສອງຢ່າງ

ງ. ຕໍ່ສູ້ໄດ້ໃນທັງສອງຢ່າງ

ຕອບ:

***1*** *ກ. ປ່າ* *ຂ. ຫຼັງຄາພະວິຫານ*

***2*** *ຄ. ຖືກ*

***3*** *ຄ. ຖືກ*

***4*** *ງ. ຖືກ*

*ສຸພາສິດ 30:8-9 ເວົ້າວ່າ "ຂໍຢ່າໃຫ້ຂ້າພະເຈົ້າເປັນຄົນຈົນຫຼືເປັນຄົນມັ່ງມີ ຂໍໂຜດລ້ຽງຂ້າພະເຈົ້າດ້ວຍອາຫານທີ່ຂ້າພະເຈົ້າຕ້ອງປະສົງ ຢ້ານວ່າຂ້າພະເຈົ້າຈະອີ່ມແລ້ວປະຕິເສດພະອົງໂດຍກ່າວວ່າ ພະຜູ້ເປັນເຈົ້າແມ່ນຜູ້ໃດ? ແລະຢ້ານວ່າຂ້າພະເຈົ້າຈະເປັນຄົນຈົນແລ້ວລັກຂອງ ຊຶ່ງເປັນການກະບົດຕໍ່ນາມຊື່ພະເຈົ້າ ຂອງຂ້າພະເຈົ້າ"*

**5** ສຸພາສິດ 30:9 ບັນລະຍາຍຄົນສອງຊະນິດ ຜູ້ຫນຶ່ງເປັນຄົນກິນອີ່ມແລ້ວຈອງຫອງປະຕິເສດພະເຈົ້າ ອີກຜູ້ຫນຶ່ງເປັນຄົນ ຈົນຈຶ່ງກະບົດຕໍ່ນາມຊື່ພະເຈົ້າ.
ໃນຮູບຕໍ່ໄປນີ້ຄົນໃດຢູ່ໃນ ຮູບ ກ. ຄົນໃດຢູ່ໃນ ຮູບ ຂ.







ກ. ____________________

ຂ. ຮູບໃດທີ່ກົງກັບການທົດລອງຂອງພະເຢຊູ ຢູ່ໃນປ່າ? ____________________

ຄ. ຮູບໃດກົງກັບການທົດລອງຂອງພະເຢຊູ ຢູ່ຫຼັງຄາພະວິຫານ? ____________________

ງ. ຕາມ ສຸພາສິດ 30:8 ເຫມາະສົມທີ່ຈະມີອາຫານຫນ້ອຍຫຼາຍປານໃດ? ____________

**6** ເມື່ອພະເຢຊູພົບການທົດລອງຢູ່ຫຼັງຄາພະວິຫານ ການທົດລອງນັ້ນກົງກັບອັນໃດຕໍ່ໄປນີ້? (ໃຫ້ເລືອກ)

ກ. ການຊອກຫາອາຫານປາສະຈາກພະເຈົ້າ

ຂ. ການຊອກຫາກຽດຕິຍົດປາສະຈາກພະເຈົ້າ

ຄ. ການຂອງຫາອຳນາດປາສະຈາກພະເຈົ້າ

ຕອບ:

**5** *ກ. ຂ້າງຊ້າຍຄືຄົນທີ່ກິນອີ່ມ. ຂ້າງຂວາຄົນທຸກຈົນ*

**6** *ຂ. ຖືກ ຂ. ຂວາ ຄ. ຊ້າຍ*

**7** ຄວາມເວົ້າຕໍ່ໄປນີ້ ທີ່ມາຈາກພະຄຳພີເດີມສະແດງການຢາກໄດ້ກຽດຕິຍົດປາສະຈາກພະເຈົ້າ ເຊັ່ນດຽວກັນກັບການທົດ ລອງຂອງພະເຢຊູ ຢູ່ຫຼັງຄາພະວິຫານ. ອຊຢ 14:13-14 ເວົ້າວ່າ:

*ຝ່າຍເຈົ້າ ເຈົ້າໄດ້ຄິດໃນໃຈວ່າ "ຂ້ອຍຈະຂຶ້ນໄປຟ້າສະຫວັນ ຂ້ອຍຈະຍົກຍໍພະທີ່ນັ່ງຂອງຂ້ອຍ ຕັ້ງເທິງດາວທັງຫຼາຍ ຂອງພະເຈົ້າ ຂ້ອຍຈະນັ່ງເທິງພູແຫ່ງຊຸມນຸມກັນທີ່ສຸດທິດອຸດອນ. ຂ້ອຍຈະ ໄປເທິງເມກທັງຫຼາຍຂ້ອຍຈະເປັນສະເໝີກັນກັບພະເຈົ້າ ອົງສູງສຸດ"*

ໃນຂໍ້ພະຄຳພີນີ້ເຮົາຮູ້ວ່າຜູ້ທີ່ຢາກໄດ້ກຽດຕິຍົດປາສະຈາກພະເຈົ້າ ຄິດຢ່າງໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. "ຂ້ອຍຈະຂຶ້ນໄປຟ້າສະຫວັນ"

ຂ. "ນອກຈາກຂ້ອຍບໍ່ມີຜູ້ສຳຄັນ"

ຄ. "ຂ້ອຍຈະຍົກຍໍພະທີ່ນັ່ງຂອງຂ້ອຍເທິງດາວທັງຫຼາຍຂອງພະເຈົ້າ"

ງ. "ຂ້ອຍຈະເປັນພະເຈົ້າ"

ຈ. "ຂ້ອຍຈະເປັນສະເໝີກັບພະເຈົ້າອົງສູງສຸດ"

**8** ຄົນໃດທີ່ຢາກໃຫ້ຄົນອື່ນສັນລະເສີນເຂົາແມ່ນແຕ່ຄົນນັ້ນຢາກໄດ້ກຽດຕິຍົດ. ໃນ 3 ຂໍ້ຕໍ່ໄປນີ້ ພະເຢຊູກ່າວໂທດຕໍ່ຄົນທີ່ ຢາກໄດ້ກຽດຕິຍົດໃນ 2 ຂໍ້ໃດ?

______ໂຢຮັນ 5:44 ______ໂຢຮັນ 12:43 ______ໂຢຮັນ 11:35

**9** ຢູ່ຫຼັງຄາພະວິຫານ ພະເຢຊູຖືກທົດລອງຢ່າງໃດ? ______________________________

**10** ໃນພະຄຳພີ ມີຫຼາຍຄວາມທີ່ມີຄວາມໝາຍຄ້າຍຄືກັນກັບຄວາມ ຈອງຫອງ.ໃຫ້ທ່ານເລືອກ ໝາຍເອົາຂໍ້ໃດທີ່ມີສ່ວນເຂົ້າ ກັນກັບຈອງຫອງ.

| | | |
|---|---|---|
| ກ. ທະເຍີທະຍານ. | ງ. ຖືຕົວ. | ຊ. ໃຈແຂງກະດ້າງ. |
| ຂ. ອວດຕົວ. | ຈ.ເຫັນແກ່ຕົວ. | ຍ. ຫົວດື້. |
| ຄ. ຖ່ອມຕົວ. | ສ.ອ່ອນໂຍນ. | ດ. ມັກຄູ້ຍໂມ້. |

ຕອບ:

*7* *ກ. ຄ. ແລະຈ. ຖືກ ຄ. ພໍທີ່ຕ້ອງປະສົງ*

*8* *ໂຢຮັນ 5:44 ແລະ ຢຮ 12:43*

*9* *ຊອກຫາກຽດຕິຍົດ (ຫຼື ຈອງຫອງ)*

*10* *ກ. ຂ. ງ. ຈ. ຊ. ຍ. ແລະ ດ*

**11** ໃນ 5 ຂໍ້ຕໍ່ໄປນີ້ມີ 3 ຂໍ້ເວົ້າເຖິງຄົນຕົກໃນການທົດລອງດ້ານຄວາມຈອງຫອງ ມີ 2 ຄົນບໍ່ຕົກໃນຄວາມຈອງຫອງ. ໃຫ້ທ່ານ ຂຽນຄໍາ "ຈອງຫອງ" ຫຼື "ບໍ່ຈອງຫອງ" ໃສ່ທຸກຂໍ້ໃຫ້ຖືກ.

ກ. ປະຖົມມະການ 11:4 ພວກຄົນໃນປະເທດຊີນາຍ ____________________

ຂ. ອົບພະຍົບ 5:2 ກະສັດຟາລາໂອ ____________________

ຄ. ມັດທາຍ 3:11 ໂຢຮັນບັບຕິສໂຕ ____________________

ງ. ລູກາ 5:25 ຄົນເປັ້ຽ ____________________

ຈ. ກິດຈະການ 8:19 ຊີໂມນຜູ້ເປັນໝໍເວດມົນ ____________________

**12** ມີທາງຢູ່ຫຼາຍເສັ້ນທີ່ພະມານຈະທົດລອງໃຫ້ເຮົາຈອງຫອງໄດ້. ໃນຂ້າງຊ້າຍມີລາຍຊື່ເຫດຕ່າງໆທີ່ພະຍາມານຈະໃຊ້ ເພື່ອ ໃຫ້ເຮົາຕົກໃນບາບຈອງຫອງ. ໃຫ້ທ່ານອ່ານພະຄໍາພີຂ້າງຂວາແລ້ວເອົາມາຈັບຄູ່ໃຫ້ຖືກກັບເນື້ອຄວາມຂ້າງຊ້າຍ:

| | |
|---|---|
| _______1. ຄວາມຄິດເຫັນຂອງເຮົາ. | ກ. ລູກາ 12:19-20. |
| _______2. ຊັບສົມບັດຫຼືຄວາມສະຫຼາດຂອງເຮົາ. | ຂ. ໂລມ 1:22. |
| _______3. ຕໍາແໜ່ງຂອງເຮົາ. | ຄ. ລູກາ 14:7. |
| _______4. ເຄື່ອງນຸ່ງຂອງເຮົາ. | ງ. 1 ເປໂຕ 3:3 |

**13** ພະເຢຊູຖືກທົດລອງໃຫ້ເຮັດຢ່າງໃດ ຢູ່ຫຼັງຄາພະວິຫານ? ____________________

**14** ຂໍໃຫ້ທ່ານຍົກຕົວຢ່າງມາຈັກ 3 ປະການ ໃນສິ່ງທີ່ພະຍາມານຈະໃຊ້ໃນການທົດລອງໃຫ້ຄົນຈອງຫອງມີອັນໃດແດ່? ____________________

______________________________________________

______________________________________________

______________________________________________

______________________________________________

ຕອບ:

***11*** *ກ. ຂ. ຈ. ຈອງຫອງ ຄ. ງ. ບໍ່ຈອງຫອງ*

***12*** *1. ຖືກກັບ ຂ. 2. ຖືກກັບ ກ. 3. ຖືກກັບ ຄ. 4. ຖືກກັບ ງ.*

***13*** *ຈອງຫອງ (ຂອກຫາກຽດຕິຍົດກໍ່ໄດ້)*

***14*** *ແລ້ວແຕ່ໝູ່ເຫັນດີໃນປະຊຸມ*

**15** ໃຫ້ທ່ານອ່ານ ລູກາ 18:9-14

ກ. ໃນຮູບຕໍ່ໄປນີ້ຄົນຂ້າງຊ້າຍປຽບກັບໃຜ? ________________________________

ຂ. ຄົນຂ້າງຂວາເດ່? ____________________________________________

ຄ. ຄົນໃດຕົກໃນບາບຄວາມຈອງຫອງ? ______________________________

ງ. ຄົນໃດບໍ່ຈອງຫອງ? ___________________________________________




*ທ່ານສັງເກດບໍ່ວ່າ ບົດສອນນີ້ເນັ້ນຄຳເລື່ອງຄວາມຈອງຫອງແລະຄົນຊອກຫາກຽດຕິຍົດຫຼາຍແທ້ ແຕ່ມີເຫດຢູ່ເພາະຜູ້ ນຳໃນຄຼິດຕະຈັກອາດຈະເປັນຜູ້ທີ່ມີອິດທິພົນໄດ້ແລະອາດຈະຕົກໃນບາບຈອງຫອງໄດ້ງ່າຍກວ່າຄົນອື່ນໆ. ເຖິງຈະແມ່ນອັກຄະສາວົກຂອງພະເຢຊູກໍ່ຕາມເຂົາຕົກໃນບາບນີ້ກໍ່ມີ.*

**16** ພວກອັກຄະສາວົກຕົກໃນບາບຈອງຫອງຢ່າງໃດ? ໃຫ້ອ່ານ ລູກາ 22:24 ____________

______________________________________________________________

*ຜູ້ນຳໃນຄຼິດສະຈັກບາງຄົນຕົກໃນບາບຈອງຫອງ ເຂົາມັກສະດງວ່າເຂົາຮັກພະເຈົ້າຫຼາຍກວ່າຄຼິດສະຕຽນທຳມະດາ ໃນມັດທາຍ 6: ມີຕົວຢ່າງ 3 ປະການເລື່ອງຜູ້ນຳດ້ານສາສະໜາທີ່ຕົກໃນບາບຈອງຫອງ.*

**17** ໃນມັດທາຍບົດທີ່ 6 ໃຫ້ສັງເກດເປັນຕົ້ນຂໍ້ 2 ຂໍ້ 5 ແລະ ຂໍ້ 16 ຂໍ້ໃດເວົ້າເຖິງການຈອງຫອງດັ່ງຕໍ່ໄປນີ້:

ກ. ໃນການໃຫ້ທານ ____________________________________________

ຂ. ໃນການອ້ອນວອນ ___________________________________________

ຄ. ໃນການອົດອາຫານ __________________________________________

ຕອບ:

**15** *ກ. ຟາລິຊາຍ ຂ. ຄົນເກັບພາສີ ຄ. ຟາລິຊາຍ ງ. ຄົນເກັບພາສີ*

**16** *ເຂົາຖຽງກັນເລື່ອງໃຜຈະເປັນຜູ້ໃຫຍ່ກວ່າໝູ່*

**17** *ກ. ຂໍ້ 2 ຂ. ຂໍ້ 5 ຄ. ຂໍ້ 16*

**18** ຜູ້ນຳໃນຄຣິດສະຈັກຍິ່ງຮັບພາລະກໍ່ຍິ່ງມີການທົດລອງໃຫ້ຈອງຫອງວ່າ ເປັນຜູ້ຮັກພະເຈົ້າຫຼາຍ ຫຼື ຜູ້ມີຄວາມສາມາດ ຫຼາຍ. ພວກຟາລິຊາຍຕົກໃຍບາບນັ້ນແລ້ວ. ໃນມັດທາຍ 23:5 ສິ່ງທີ່ເຂົາເຮັດເຂົາເຮັດເພື່ອຫຍັງ? ____________________________________________

**19** ທ່ານເອງໄດ້ສະມັກມາສຶກສາພະຄຳພີໃນຫຼັກສູດນີ້ແລ້ວ ພະຍາມານກໍ່ໄດ້ສັງເກດມາແລ້ວອາດຈະມາທົດລອງທ່ານ ເອງຍິ່ງກ່ວາເກົ່າ. ນັກສຶກສາພະຄຳພີອາດຈະຖືກລໍ້ລວງຢ່າງໃດ? ອ່ານ ຄລຕ 6:3 ________________________________________________________

**20** ໃຫ້ອ່ານ 1 ເປໂຕ 5:8 ຜູ້ນຳຄຣິດສະຕຽນອາດຈະຕົກໃນບາບຈອງຫອງໄດ້ຢ່າງໃດ?

____________________________________________________________



**21** ໃຫ້ທ່ານຂຽນຄຳ..ຈອງຫອງ.. ກ່ອນປະໂຫຍກໃດທີ່ອ້າງເຖິງຜູ້ນຳຄຣິດສະຕຽນອາດຈອງຫອງ:

ກ. ______________________________ ທີ່ຈະສະແດງຕົວວ່າຮັກພະເຈົ້າຫຼາຍກ່ວາໝູ່.

ຂ. ______________________________ ອ້ອນວອນຫຼາຍເມື່ອຢູ່ຜູ້ດຽວ.

ຄ. ______________________________ ຢາກເປັນເອກໃນຄຣິດສະຈັກ.

ງ. ______________________________ ຢາກແຕ່ເປັນນາຍເໜືອຜູ້ອື່ນ.

ຈ. ______________________________ ສິ່ງທີ່ເຮັດກໍເຮັດຄືນເຫັນ.

ສ. ______________________________ ຖືວ່າຕົວເອງສຳຄັນຫຼາຍເພາະຮຽນພະຄຳພີຫຼາຍ.

ຊ. ______________________________ ຊອກຫາປັນຍາແລະຄວາມຮູ້ຈາກພະຄຳພີ.

ຕອບ:

***18*** *ເພື່ອໃຫ້ມະນຸດເຫັນ*

***19*** *ຖືຕົວວ່າເປັນຜູ້ສຳຄັນ*

***20*** *ດ້ວຍເປັນເຈົ້ານາຍເໜືອພວກຊຸມນຸມ*

***21*** *ຄຳ "ຈອງຫອງ" ໃສ່ກັບ ກ. ຂ. ຄ. ງ.ຈ. ແລະ ສ.*

**22** ຕອນໃດທີ່ຜູ້ນຳໃນຄຫຼິດສະຈັກເຮົາຊອກຫາກຽດຕິຍົດເພື່ອຕົວເອງ ເຮົາທົດລອງພະເຈົ້າ. ໃຫ້ທ່ານອ່ານມັດທາຍ 4:7 ພະເຢຊູຕອບພະຍາມານຢ່າງໃດ? ____________________

**23** ພະຍາມານມາທົດລອງພະເຢຊູ ຢູ່ຫຼັງຄາພະວິຫານ ໃນດ້ານໃດ? __________________

**24** ເວລາໃດທີ່ເຮົາຈອງຫອງຫຼືຊອກຫາກຽດຕິຍົດໃຫ້ຕົວເອງ ໃນເວລານັ້ນເຮົາທົດລອງພະເຈົ້າຂອງເຮົາ ເພາະເຮົາຢາກ ຍຶດເອົາລັດສະໝີຂອງພະເຈົ້າມາເພື່ອຕົວເຮົາເອງ. ໃນ 4 ຂໍ້ຕໍ່ໄປນີ້ມີຂໍ້ໃດ ທີ່ອ້າງເຖິງການຍຶດລັດສະໝີຂອງພະເຈົ້າ ເອົາມາເພື່ອຕົນເອງ? ເລືອກ:

_______ ພສສ 115:1 _______ ໂລມ 1:21 _______ ໂຢຮັນ 3:16.

**25** ມີ 2 ຢ່າງໃນການຕໍ່ສູ້ຄວາມຈອງຫອງຄື: ອັນທີ່ 1 ການຖວາຍລັດສະໝີໃຫ້ພະເຈົ້າ ແລະ ອັນທີ່ 2 ຄື ຈິ່ງ ນ້ອມໃຈ ຍອມຟັງພະເຈົ້າ.

ກ. ພສສ 57:11 ອ້າງເຖິງສ່ວນໃດ? ______________________________________

ຂ. ຢກບ 4:10 ເດ? _________________________________________________

**26** ການຖວາຍລັດສະໝີໃຫ້ພະເຈົ້າ ແລະ ການຖອມຕົວລົງເປັນສິ່ງທີ່ປົກກະຕິສຳລັບຄຼິດສະຕຽນ. ໃຫ້ທ່ານອ່ານ ຢກບ 1:17-18 ແລ້ວສະຫຼູບຄວາມນັ້ນວ່າ ຄຼິດສະຕຽນທຳມະດາຄວາມຈະຖອມຕົວລົງຍົກຍ້ອງ ພະເຢຊູ ເພາະເຫດໃດ? ____________________________________

________________________________________________________________

**27** ສອງຂໍ້ຕໍ່ໄປນີ້ເວົ້າເຖິງບາດກ້າວ ສອງປະການໃນການຕໍ່ສູ້ຄວາມຈອງຫອງໃນຊີວິດຄຼິດສະຕຽນ. ອຊຢ 33:5 ແລະ 1 ເປໂຕ 5:6

ກ. ຂໍ້ໃດອ້າງເຖິງການຖວາຍລັດສະໝີໃຫ້ພະເຈົ້າ? ______________________________

ຂ. ຂໍ້ໃດອ້າງເຖິງການຖອມຕົວລົງຕໍ່ໜ້າພະອົງ? ________________________________

**28** ມີສອງສ່ວນຫຼືບາດກ້າວໃດໃນການຕໍ່ສູ້ຄວາມຈອງຫອງ? _________________________ ແລະ _______________________________________________________________

ຕອບ:

**22** *ຢ່າທົດລອງອົງພະຜູ້ເປັນເຈົ້າຂອງທ່ານ*

**23** *ໃນດ້ານຈອງຫອງ (ຊອກຫາກຽດກໍ່ໄດ້)*

**24** *ໂລມ 1:21*

**25** *ກ. ຖວາຍລັດສະໝີໃຫ້ພະເຈົ້າ ຂ. ນ້ອມໃຈຍອມຟັງພະເຈົ້າ*

**26** *ຂອງປະທານອັນດີທຸກຢ່າງມາແຕ່ພະອົງ ແລະພວກເຮົາໄດ້ບັງເກີດດ້ວຍພະທຳ (ຄຳອື່ນທີ່ມີເນື້ອຄວາມອັນດຽວກໍ່ໄດ້)*

**27** *ກ. ອຊຢ 33:5 ຂ. 1 ປຕ 5:6*

**28** *ຖະຫວາຍລັດສະໝີໃຫ້ພະເຈົ້າແລະຖອມຕົວລົງຕໍ່ໜ້າພະເຈົ້າ*

**29** ຄົນເຮົາຊະນະບາບຈອງຫອງນັ້ນແລ້ວຄາວມສຳພັນລະຫວ່າງເຮົາກັບຄົນທົ່ວໄປຈະດີກ່ວາກ່ອນອີກດ້ວຍ. ຄວາມກ່ງວພັນລະຫວ່າງເຮົາກັບພີ່ນ້ອງຈະດີຂື້ນຢ່າງໃດ? ອ່ານ 1 ຢຮ 4:21

________________________________________________________

*ຟ້າວກ່ອນ! ທ່ານເອງເຄີຍຊອກຫາກຽດຕິຍົດບໍ່?*

*ໃຫ້ທ່ານອ້ອນວອນຂໍໃຫ້ພະເຈົ້າຊ່ວຍໃຫ້ທ່ານສັງເກດຮູ້ສຶກບາບຈອງຫອງໃນຊີວິດຂອງທ່ານເອງ ຖ້າທ່ານ ເປັນຜູ້ນຳໃນຄຼິດສະຈັກ ມານຈະມາທົດລອງໃນດ້ານນັ້ນຢ່າງແນ່ນອນ. ຈົ່ງຂໍໃຫ້ພະເຈົ້າສະແດງໃຫທ່ານສັງ ເກດການທົດລອງນັ້ນແລະ ໃຫ້ທ່ານຊະນະໂດຍບາດກ້າວ 2 ປະການນັ້ນທີ່ຮຽນມາແລ້ວ.*

**30** ໃນຄຳຊຽນຫຼາຍປະໂຫຍກຕໍ່ໄປນີ້ໃຫ້ທ່ານໝາຍ √ ໃສ່ຂໍ້ທີ່ເຫັນວ່າຖືກເພື່ອຈະຊ່ວຍໃຫ້ເຮົາຮູ້ຕໍ່ສູ້ຄວາມ ຈອງຫອງໄດ້ແລະ X ໃສ່ຂໍ້ທີ່ຜິດ.

ກ. _______ ອ້ອນວອນເພື່ອຄົນທີ່ເປັນສັດຕູ.
ຂ. _______ ຊ່ອຍທຸກຄົນຈະເປັນໝູ່ເຮົາກໍ່ດີ ບໍ່ເປັນໝູ່ກໍ່ດີ.
ຄ. _______ ຮັບຮູ້ຂອງປະທານຂອງຜູ້ອື່ນ ໆ.
ງ. _______ ຮຽນຮູ້ຈາກປະສົບປະການຂອງຜູ້ອື່ນ.
ຈ. _______ ຊ່ອຍໝູ່ເພື່ອນພີ່ນ້ອງຂອງເຮົາຫຼາຍກ່ວາຜູ້ອື່ນ.
ສ. _______ ເຫັນພະເຈົ້າອວຍພອນຜູ້ນຳຄຼິດສຕຽນຄົນອື່ນເລີຍດີໃຈພ້ອມ.
ຊ. _______ ເປັນພະຍານເພື່ອພະເຢຊູ ເຖິງວ່າຜູ້ອື່ນຈະຕໍ່ສູ້ກໍ່ຕາມ.
ຍ. _______ ອິດສາຜູ້ອື່ນທີ່ມີຂອງປະທານຈາກພະເຈົ້າຕ່າງກັນກັບເຮົາ.

**31** ໃນຊ່ອງຫວ່າງຕໍ່ໄປນີ້ໃຫ້ທ່ານຂຽນຜົນທີ່ອາດຈະປະກົດມາໃນຊີວິດຂອງຜູ້ນຳຄຼິດສະຕຽນທີ່ຊະນະບາບຈອງຫອງຢູ່.

ກ. ____________________________________________________
____________________________________________________
ຂ. ____________________________________________________
____________________________________________________

**32** ກັບມາຖາມອີກ ມີ 2 ບາດກ້າວໃດເພື່ອເຮົາຈື່ງຈະຕໍ່ສູ້ຊະນະຄວາມຈອງຫອງໃນຊີວິດເຮົາເອງ?

ກ. ____________________________________________________
ຂ. ____________________________________________________

ຕອບ:

**29** *ດ້ວຍເຮົາຈະຮັກເຂົາ*

**30** *ກ. ຂ. ຄ. ງ. ຈ. ສ. ຊ. ຖືກ*

**31** *ບໍ່ມີຄຳຕອບຕາຍຕົວຈົ່ງປຶກສາ ປຽບທຽບຄວາມຄິດເຫັນຂອງໃນໝູ່ປະຊຸມ*

**32** *ກ. ຖະຫວາຍລັດສະໝີໃຫ້ພະເຈົ້າ ຂ. ຖ່ອມໃຈລົງ*

*ໃຫ້ທ່ານກັບໄປເບິ່ງຮູບໜ້າປົກບົດນີ້ອີກ. ພະເຢຊູສາມາດຈະເລືອກຈາກທາງສອງເສັ້ນນັ້ນໄດ້. ທ່ານເອງຈະຖືກ ການທົດລອງເຊັ່ນດຽວກັນ ຖ້າຈະຊອກຫາກຽດຕິຍົດເພື່ອຕົນເອງ ຜົນສຸດທ້າຍຈະເປັນຢ່າງໃດ? ໃຫ້ຕຽມຕົວປຶກ ສາຫາລືໃນປະຊຸມ.*

*ຢ່າລືມບົດເສັງ!*